ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1489 /ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 20 ກໍລະກົດ 2012

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ນັກທຸລະກິດ(ພາຍໃນ ແລະ ຕ່າງປະເທດ)

ເລື່ອງ: ປະເພດສິນຄ້າ ແລະ ອັດຕາສ່ວນທຶນ ທີ່ເປີດໃຫ້ຜູ້ລົງທຶນຕ່າງປະເທດປະກອບທຶນ ເພື່ອສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ

- ອີງໃສ່ມາດຕາ 5 ແລະ 8 ຂອງຂໍ້ຕົກລົງ, ເລກທີ 0977/ອຄ.ສລທ, ລົງວັນທີ 18 ພຶດສະພາ 2012;
- ອີງໃສ່ພັນທະໃນສົນທິສັນຍາສາກົນດ້ານການຄ້າ ທີ່ ສປປ ລາວໄດ້ຮັບຮອງ ຫລື ຕົກລົງ.

ດ້ວຍຈຸດປະສົງ, ດ້ານໜຶ່ງ-ເພື່ອສະຫງວນປະເພດທຸລະກິດນຳເຂົ້າ ເພື່ອຂາຍຍົກໄວ້ສຳລັບພົນລະເມືອງລາວ ແລະ ອີກດ້ານໜຶ່ງ ກໍເພື່ອເປີດໃຫ້ຜູ້ລົງທຶນຕ່າງປະເທດ ໄດ້ປະກອບທຶນຮ່ວມກັບຄົນລາວໃນການສ້າງຕັ້ງ ແລະ ດຳເນີນທຸລະກິດນຳເຂົ້າ ເພື່ອຂາຍຍົກບາງປະເພດສິນຄ້າ ໃນອັດຕາສ່ວນທຶນທີ່ສົມເຫດສົມຜົນ ຕາມການກຳນົດ ຫລື ຕາມທີ່ປະເທດເຮົາໄດ້ໃຫ້ພັນທະໃນສົນທິສັນຍາສາກົນດ້ານການຄ້າ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດກ່ຽວກັບປະເພດສິນຄ້າເປີດ ແລະ ບໍ່ເປີດ ໃຫ້ຜູ້ລົງທຶນຕ່າງປະເທດ ຮ່ວມທຶນສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ ດັ່ງນີ້:

1. ປະເພດສິນຄ້າທີ່ ສປປ ລາວ ເປີດໃຫ້ຜູ້ລົງທຶນຕ່າງປະເທດສາມາດຮ່ວມທຶນ ເພື່ອຂຶ້ນທະບຽນວິສາຫະກິດສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ ໄດ້ ໃນອັດຕາສ່ວນທຶນບໍ່ເກີນ 49 ສ່ວນຮ້ອຍຂອງທຶນຈົດທະບຽນວິສາຫະກິດທັງໝົດ ປະກອບດ້ວຍ:
   - ປະເພດແຜນແພ (Textile). ພາຍໃຕ້ຂອບສັນຍາອາຊຽນກວມເອົາລະຫັດ 62231 ແລະ 62232, ສ່ວນລະບົບ ISIC ແມ່ນມອບໃນລະຫັດ 4641;
   - ປະເພດເຄື່ອງນຸ່ງຫົ່ມ (Clothing). ພາຍໃຕ້ຂອບສັນຍາອາຊຽນກວມເອົາລະຫັດ 62233 ແລະ 62234, ສ່ວນລະບົບ ISIC ແມ່ນມອບໃນລະຫັດ 4641;

- ປະເພດເກີບ, ຖົງຕີນຕ່າງໆ (Footwear). ລະຫັດພາຍໃຕ້ຂອບສັນຍາອາຊຽນແມ່ນ 62235, ສ່ວນລະບົບ ISIC ແມ່ນນອນໃນລະຫັດ 4641.

ການປັບປຸງແປງເພີ່ມ ຫລື ຫຼຸດລາຍການປະເພດສິນຄ້າ ແລະ ອັດຕາສ່ວນທຶນຂອງແຕ່ລະປະເພດສິນຄ້າ ຈະແຈ້ງໃຫ້ຊາບໃນແຕ່ລະໄລຍະ.

2. ນອກຈາກປະເພດສິນຄ້າ ຕາມທີ່ກ່າວມາໃນຂໍ້ໜຶ່ງຂ້າງເທິງນີ້ ແມ່ນບໍ່ເປີດ ແລະ ບໍ່ອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ ຮ່ວມທຶນກັບຜູ້ລົງທຶນຕ່າງປະເທດໄດ້.

3. ຫ້ອງການຕົວແທນ/ທຸລະກິດນຳເຂົ້າ ເພື່ອຂາຍຍົກສິນຄ້າ ທີ່ມີທັງປະເພດສິນຄ້າເປີດ ແລະ ບໍ່ເປີດ ແມ່ນບໍ່ອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດ ຮ່ວມທຶນນຳໄດ້.

4. ການຂຶ້ນທະບຽນວິສາຫະກິດ ໃຫ້ມີຕົວບຸກຄົນຕາມຂໍ້ໜຶ່ງ ຂອງແຈ້ງການສະບັບນີ້, ຫາກພາຍຫຼັງມາພົບວ່າ: ເປັນການຂຶ້ນທະບຽນວິສາຫະກິດ ທີ່ເກີດຈາກການສົມຮູ້ຮ່ວມຄິດ ສວຍໂອກາດຂອງຜູ້ລົງທຶນທີ່ເປັນຄົນລາວ ໂດຍທີ່ຕົນບໍ່ໄດ້ປະກອບທຶນ ຕາມອັດຕາສ່ວນທີ່ກຳນົດໄວ້ ຫລື ບໍ່ມີສ່ວນຮ່ວມຢ່າງເປັນເຈົ້າການ ໃນທຸລະກິດນັ້ນ ໃຫ້ຖືວ່າການອອກທະບຽນວິສາຫະກິດດັ່ງກ່າວ ເປັນໂມຄະ ແລະ ຈະຖືກສັ່ງໃຫ້ດຳເນີນການຍຸບເລີກວິສາຫະກິດຕາມຂັ້ນຕອນຂອງກົດໝາຍວ່າດ້ວຍວິສາຫະກິດທັນທີ. ນອກຈາກ ນັ້ນຍັງຈະຖືກປະຕິບັດມາດຕະການຕາມທີ່ໄດ້ບົ່ງໄວ້ໃນມາດຕາ 236 ຂອງກົດໝາຍວິສາຫະກິດ. ໃນກໍລະນີນີ້ ຜູ້ລົງທຶນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນຜູ້ລົງທຶນທີ່ເປັນຄົນລາວ ຕ້ອງ :

- ຮັບຜິດຊອບຕໍ່ໜ້າກົດໝາຍ ຖານແຈ້ງຂໍ້ມູນທີ່ບໍ່ເປັນຈິງຕໍ່ທາງລັດຖະການ ;
- ຮັບຜິດຊອບທຸກການກະທຳຂອງວິສາຫະກິດທີ່ກ່ຽວຂ້ອງ ຕໍ່ບຸກຄົນພາຍນອກ (ເຊັ່ນ ໜີ້ສິນຕ່າງໆ).

5. ໃນກໍລະນີລະເມີດ ຂໍ້ກຳນົດຕາມທີ່ໄດ້ກ່າວມາໃນຂໍ້ 2 ແລະ ຂໍ້ 3 ຂອງແຈ້ງການສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 238 ຂອງກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ.

6. ແຈ້ງການສະບັບນີ້ ອອກມາເພື່ອປັບປຸງແທນ ແລະລົບລ້າງແຈ້ງການສະບັບເລກທີ 1265/ອຄ.ສລທ, ລົງວັນທີ 28 ມິຖຸນາ 2012, ກ່ຽວກັບປະເພດສິນຄ້າ ແລະ ອັດຕາສ່ວນທຶນ ທີ່ເປີດໃຫ້ຜູ້ລົງທຶນຕ່າງປະເທດປະກອບທຶນ ເພື່ອສ້າງຕັ້ງຫ້ອງການຕົວແທນ/ທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຜ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ຫຼ່ງສະຫວາດ ສະແຫວງສຶກສາ